# ທັກສະການໂຄສະນາເຜີຍແຜ່ກົດໝາຍ ຢູ່ ສປປ ລາວ

# Law advertising skills in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 6

## ການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປື້ມນິຕິກຳ

## Textbook advertising

### 1. ຄວາມໝາຍ ແລະ ຄວາມສຳຄັນ

ໃນພາລະກິດແຫ່ງການປົກປັກຮັກສາ, ສ້າງສາພັດທະນາປະເທດຊາດ ແລະ ເສີມຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນ, ສ້າງລັດຂອງ ສປປ ລາວ ໃຫ້ເປັນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ການຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍຂອງແຕ່ລະລັດ, ແຕ່ລະສັງຄົມ ມັນແມ່ນຄວາມຮຽກຮ້ອງຕ້ອງການອັນຈຳເປັນ, ຮີບດ່ວນ ແລະ ພາວະວິໄສ ເພື່ອເຮັດໃຫ້ລັດຖະທຳມະນູນ ແລະ ກົດໝາຍທີ່ລັດວາງອອກນັ້ນ ກາຍເປັນສະຕິຂອງສັງຄົມຢ່າງແທ້ຈິງ, ການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປື້ມນິຕິກຳເປັນຮູບການໂຄສະນາເຜີຍແຜ່ກົດໝາຍອີກຮູບແບບໜຶ່ງທີ່ລັດຖະບານຊຸກຍູ້ສົ່ງເສີມ.

**ກ. ຄວາມໝາຍ**

ການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປື້ມນິຕິກຳ ແມ່ນການນຳເອົາກົດໝາຍຕົ້ນສະບັບມາຈັດພິມເປັນປຶ້ມ, ເປັນຕົ້ນວ່າ ປຶ້ມກົດໝາຍ, ປຶ້ມສັງລວມກົດໝາຍ, ປຶ້ມສັງລວມນິຕິກຳໃຕ້ກົດໝາຍ, ປຶ້ມປະມວນກົດໝາຍ ແລະ ປຶ້ມນິຕິກຳໃຕ້ກົດໝາຍອື່ນໆ ເພື່ອແຈກຢາຍ, ຈຳໜ່າຍ, ນຳໃຊ້ເຂົ້າໃນວຽກງານໂຄສະນາເຜີຍແຜ່ກົດໝາຍ, ການສຶກສາຄົ້ນຄວ້າ, ການຈັດຝຶກອົບຮົມ ແລະ ອື່ນໆ.

ຮູບແບບການໂຄສະນາເຜີຍແຜ່ກົດໝາຍໃນລັກສະ ນີ້ມີຈຸດພິເສດ ແລະ ບໍ່ໃຊ້ກຳລັງຄົນໂດຍກົງເຂົ້າຮ່ວມໃນການໂຄສະນາ ແຕ່ເປັນການໝູນໃຊ້ຜະລິດຕະພັນທີ່ຈັດພິມ ເພື່ອເປັນເຄື່ອງມືໃນການໂຄສະນາເຜີຍແຜ່ກົດໝາຍຜ່ານການແຈກຢາຍ, ຈຳໜ່າຍຜະລິດຕະພັນທີ່ຈັດພິມຄື: ປຶ້ມກົດໝາຍ, ປຶ້ມສັງລວມກົດໝາຍ, ປຶ້ມສັງລວມນິຕິກຳໃຕ້ກົດໝາຍ, ປຶ້ມປະມວນກົດໝາຍ ແລະ ປຶ້ມນິຕິກຳໃຕ້ກົດໝາຍ.

ການໂຄສະນາເຜີຍແຜ່ກົດໝາຍຜ່ານພິມປື້ມນິຕິກຳ ນຳຄວາມໝາຍພິເສດມາໃຫ້ຜູ້ອ່ານເຊັ່ນ: ການອ່ານໜັງສືກົດໝາຍຊ່ວຍປັບປຸງຄວາມຮູ້,  ປຶ້ມນິຕິກຳແມ່ນປຶ້ມປະເພດໜຶ່ງສະເພາະ, ສະໜອງຄວາມຮູ້ທີ່ມີປະໂຫຍດຫຼາຍຢ່າງໃຫ້ແກ່ຜູ້ອ່ານ. ນີ້ແມ່ນແຫຼ່ງຄວາມຮູ້ທີ່ສັງລວມບັນດາລະບຽບການ ແລະ ກົດໝາຍໃນຮູບແບບຂອງ ສປປລາວ.

ຄວາມໝາຍຂອງການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກຳ ຍັງສະທ້ອນໃຫ້ເຫັນ ວ່າການອ່ານປຶ້ມນິຕິກຳ ແມ່ນຄວາມຈຳເປັນຂອງທຸກໆຄົນ, ຈຸດປະສົງໃນການຄົ້ນຫາຂໍ້ມູນທີ່ເປັນປະໂຫຍດເພື່ອຮັບໃຊ້ວຽກງານການສຶກສາ ແລະ ຄົ້ນຄວ້າ.

ຄວາມໝາຍຂອງປຶ້ມນິຕິກຳໃຫ້ຜູ້ອ່ານໄດ້ຄວາມຮູ້ທີ່ເປັນປະໂຫຍດຫຼາຍ. ການນຳໃຊ້ປຶ້ມເພື່ອປູກຝັງແນວຄິດຂອງຕົນເອງເປັນສິ່ງຈຳເປັນ, ປຶ້ມນິຕິກຳທີ່ມີຄວາມໝາຍພິເສດຕໍ່ຜູ້ອ່ານເຊັ່ນ:

ປຶ້ມນິຕິກຳ ( ປຶ້ມກົດໝາຍ ) ແມ່ນປຶ້ມປະເພດໜຶ່ງສະເພາະ, ສະໜອງຄວາມຮູ້ທີ່ມີປະໂຫຍດຫຼາຍຢ່າງໃຫ້ແກ່ຜູ້ອ່ານ, ນີ້ແມ່ນແຫຼ່ງຄວາມຮູ້ທີ່ສັງລວມບັນດາລະບຽບການ ແລະ ກົດໝາຍ. ດັ່ງນັ້ນ, ມັນຈະຊ່ວຍໃຫ້ທ່ານປັບປຸງ ແລະ ຂະຫຍາຍຄວາມຮູ້ຂອງທ່ານ.

ໃນເວລາທີ່ທ່ານອ່ານປຶ້ມນິຕິກຳ ແລະ ດູດຊຶມຂໍ້ມູນ, ຈະເຮັດໃຫ້ງ່າຍຕໍ່ການປະຕິບັດໜ້າທີ່ວຽກງານ ໃນຫຼາຍໆກໍລະນີ, ການແຊກແຊງທາງດ້ານກົດຫມາຍແມ່ນຈຳເປັນ, ດັ່ງນັ້ນທ່ານຈະບໍ່ແປກໃຈ. ຈາກນັ້ນ, ບັນຫາທີ່ຂັດແຍ່ງກັນສາມາດແກ້ໄຂໄດ້ຢ່າງວ່ອງໄວ, ເອົາຄວາມສະດວກສະບາຍໃຫ້ກັບຄົນຈຳນວນຫຼາຍ, ບໍ່ເຮັດໃຫ້ເກີດການຂັດແຍ້ງ ຫຼື ການໂຕ້ຖຽງ.

ແຕ່ລະຄົນທີ່ອ່ານປຶ້ມນິຕິກຳ ຕາມແນວຄິດຂອງຕົນເອງຈະເຫັນເນື້ອໃນ ໃນປຶ້ມຈາກດ້ານຕ່າງໆ, ຄວາມສຳຄັນຂອງປຶ້ມແມ່ນສາມາດຊ່ວຍໃຫ້ຜູ້ອ່ານພັດທະນາຄວາມຄິດສ້າງສັນຂອງພວກເຂົາ ຈາກບ່ອນນັ້ນ, ນຳໃຊ້ຄວາມຮູ້ໃນປຶ້ມນັ້ນໄປໃຊ້ໃນການປະຕິບັດຕົວຈິງເພື່ອຈັດການກັບສະຖານະການຕ່າງໆ.

ການອ່ານປຶ້ມນິຕິກຳ ຈະຊ່ວຍໃຫ້ທ່ານກຳຈັດນິດໄສທີ່ບໍ່ດີ ແລະ ສ້າງນິດໄສໃຫມ່, ປຶ້ມແມ່ນແຫຼ່ງຄວາມຮູ້ທີ່ບໍ່ມີທີ່ສິ້ນສຸດ, ດັ່ງນັ້ນບໍ່ມີເຫດຜົນໃດ ສຳລັບຄົນທີ່ຈະປະຕິເສດມັນ.

**໒. ຄວາມສຳຄັນ**

ຄວາມສຳຄັນໃນການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກຳ ສຳລັບ ສປປ ລາວ ແມ່ນມີດັ່ງນີ້:

ການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກຳ ແມ່ນມີຄວາມສຳຄັນຫຼາຍ ຊຶ່ງເປັນອີກວິທີໜຶ່ງ ທີ່ເຮັດໃຫ້ທຸກຊັ້ນຄົນສາມາດເຂົ້າເຖິງກົດໝາຍໄດ້ດ້ວຍການອ່ານປຶ້ມກົດໝາຍ ເພາະວ່າປະຊາຊົນຈຳນວນຫຼວງຫຼາຍໂດຍສະເພາະ ຢູ່ ສປປ ລາວ ຍັງບໍ່ທັນມີເຄື່ອງມືທີ່ທັນສະໄໝ ແລະ ບໍ່ທັນຮູ້ວິທີຊອກຫາກົດໝາຍ ຜ່ານສື່ເອເລັກໂຕຣນິກ. ສະນັ້ນ, ປຶ້ມນິຕິກຳ ຈຶ່ງເປັນທາງເລືອກໜຶ່ງທີ່ສາມາດອ່ານໄດ້ທຸກເວລາ ແລະ ພົກພາງ່າຍເພາະກົດໝາຍມັນກ່ຽວພັນກັບການ ດຳລົງຊີວິດຂອງປະຊາຊົນໂດຍກົງ, ຖ້າໃຜລະເມີດກົດໝາຍກໍຈະຖືກລົງໂທດຕາມກົດໝາຍ, ຖ້າທຸກຄົນຮັບຮູ້, ເຂົ້າໃຈ ສະຕິເຄົາລົບ ແລະ ປະຕິບັດກົດໝາຍ ໃນສັງຄົມກໍຈະສູງຂຶ້ນ.

ປັດຈຸບັນຢູ່ ສປປ ລາວ ຢູ່ເຂດຊົນນະບົດ, ເຂດຫ່າງໄກສອກຫຼີກແມ່ນມີຄວາມຕ້ອງການປຶ້ມນິຕິກຳ ເພື່ອຄົ້ນຄວ້າ ແລະ ສຶກສາ, ທັງຍັງເປັນເຄື່ອງມືຫຼັກໃນການໂຄສະນາເຜີຍແຜ່ກົດໝາຍ, ໃນຂະແໜງການຍຸຕິທຳຂອງລາວ ໃນຂອບເຂດທົ່ວປະເທດພວມໃຊ້ຮູບແບບການໂຄສະນາໃຫ້ບັນດາໝູ່ບ້ານຢູ່ຂັ້ນຮາກຖານດ້ວຍວິທີການສ້າງຕູ້ປຶ້ມກົດໝາຍປະຈຳຢູ່ຫ້ອງການປົກຄອງບ້ານ ເພື່ອບັນຈຸບັນດາປຶ້ມນິຕິກຳປະເພດຕ່າງໆໄວ້ໃຫ້ປະຊາຊົນພາຍໃນໝູ່

ບ້ານໄດ້ຄົ້ນຄວ້າ ແລະ ຮໍ່າຮຽນ, ການດໍາເນີນການແບບນີ້ ໄດ້ຮັບຜົນຫຼາຍ ແລະ ມີປະໂຫຍດ, ເປັນການປະກອບສ່ວນເຂົ້າໃນການໂຄສະນາເຜີຍແຜ່ກົດໝາຍໄດ້ຢ່າງທົ່ວເຖິງ.

ການເຜີຍແຜ່ ແລະ ສຶກສາກົດໝາຍຜ່ານປຶ້ມ, ໜັງສືພິມ ແລະ ເອກະສານໂຄສະນາເຜີຍແຜ່ກົດໝາຍແມ່ນມາດຕະການທີ່ມີຄວາມໄດ້ປຽບຫຼາຍຢ່າງ. ສ້າງເງື່ອນໄຂສະດວກໃຫ້ປະຊາຊົນໃນການຮໍ່າຮຽນ ແລະ ຄົ້ນຄ້ວາຜ່ານປຶ້ມນິຕິກໍາ.

ສະນັ້ນ, ພວກເຮົາຈຶ່ງສາມາດເວົ້າໄດ້ວ່າ ການນໍາໃຊ້ສິ່ງສືພິມເຂົ້າໃນການສື່ສານເວົ້າລວມ ແລະ ເວົ້າສະເພາະກໍຄືເຂົ້າໃນການໂຄສະນາເຜີຍແຜ່ກົດໝາຍ ແມ່ນມີຄວາມຈໍາເປັນ ແລະ ສໍາຄັນເປັນຢ່າງຍິ່ງ, ເຫັນໄດ້ຄວາມສໍາຄັນຄືແນວນັ້ນ ລັດຖະບານລາວ ຈຶ່ງໄດ້ກໍານົດວ່າການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນໍາຕິກໍາ ເປັນໜຶ່ງໃນຮູບແບບການໂຄສະນາເຜີຍແຜ່ກົດໝາຍທີ່ມີປະສິດທິຜົນ.

### 2. ຈຸດປະສົງ

ຈຸດປະສົງໃນການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກໍາ ຫຼາຍປະເທດ ອາດຈະມີຈຸດປະສົງທີ່ແຕກຕ່າງກັນ ແລ້ວຕາມສະພາບແວດລ້ອມ, ຈຸດພິເສດ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ- ສັງຄົມຂອງ ແຕ່ລະປະເທດ, ສ່ວນຢູ່ ສປປ ລາວ ການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກໍາມີຈຸດປະສົງຄື:

ເພື່ອສຶກສາອົບຮົມແນວທາງຂອງພັກ, ນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ ແລະ ບັນດາຂໍ້ມູນຂ່າວສານ ທີ່ມີຄວາມສໍາຄັນ ທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ເຮັດໃຫ້ ປະຊາຊົນຮູ້ຈັກກົດໝາຍ, ເຫັນໄດ້ຄວາມສໍາຄັນ, ມີສະຕິເຄົາລົບກົດໝາຍ ແລະ ນໍາໃຊ້ກົດໝາຍ ໃຫ້ຖືກຕ້ອງ, ຮັບປະກັນຄວາມສັກສິດໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະ ເຮັດໃຫ້ປະຊາຊົນບັນດາເຜົ່າ ສາມາດເຂົ້າເຖິງກົດໝາຍ ໄດ້ໂດຍຜ່ານການອ່ານປຶ້ມ ແລະ ຮຽນຮູ້ກົດໝາຍ.

ເພື່ອເຮັດໃຫ້ປະຊາຊົນທີ່ບໍ່ສາມາດເຂົ້າເຖິງກົດໝາຍດ້ວຍວິທີການອື່ນ ແມ່ນຈະໝູນໃຊ້ພະລິດຕະພັນປຶ້ມນິຕິກໍາເປັນເຄື່ອງມື ເຊື່ອມຕໍ່ໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈກົດໝາຍ ແລະ ນິຕິກໍາປະເພດອື່ນໆໄດ້ຢ່າງທົ່ວເຖິງ ແລະ ກວ້າງຂວາງ.

ການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກໍາ ແມ່ນໜຶ່ງໃນຈຸດປະສົງຂອງລັດຖະບານທີ່ຕ້ອງການໃຫ້ກົດໝາຍໄດ້ຮັບການເຜີຍແຜ່ຜ່ານຫຼາຍຊ່ອງທາງ, ທັງແນໃສ່ເຮັດໃຫ້ກົດໝາຍໄດ້ຮັບການອະທິບາຍ ແລະ ສ້າງຄວາມກະຈ່າງແຈ້ງຜ່ານການພິມປຶ້ມນິຕິກໍາ ( ປຶ້ມກົດໝາຍ ) ເພື່ອຫຼຸດຜ່ອນໃນການນໍາໃຊ້ກໍາລັງຄົນໃນການໂຄສະນາກົດໝາຍ, ເຮັດໃຫ້ກົດໝາຍໄດ້ເຂົ້າເຖິງທຸກສະຖານທີ່, ທຸກເປົ້າໝາຍໃນທົ່ວສັງຄົມ.

### 3. ຂັ້ນຕອນ

ການພິມ ຫຼື ຈັດພິມປຶ້ມນິຕິກໍາ ຢູ່ ສປປ ລາວ ແມ່ນໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

ອົງການຈັດຕັ້ງທີ່ຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ ທີ່ມີຈຸດປະສົງຈັດພິມປຶ້ມນິຕິກໍາ, ປຶ້ມສັງລວມກົດໝາຍ, ປຶ້ມສັງລວມນິຕິກໍາໃຕ້ກົດໝາຍ, ປຶ້ມປະມວນກົດໝາຍ ແລະ ປຶ້ມນິຕິກໍາໃຕ້ກົດໝາຍ ຕ້ອງໄດ້ເຮັດ ໜັງສືສະເໜີຂໍອະນຸຍາດຈັດພິມຈາກ ກະຊວງຍຸຕິທໍາ (ກົມໂຄສະນາເຜີຍແຜ່ກົດໝາຍ).

ເມື່ອໄດ້ຮັບໜັງສືສະເໜີ ຈາກອົງການຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍແລ້ວ ກົມໂຄສະນາເຜີຍແຜ່ ກົດໝາຍ ຈະພິຈາລະນາພາຍໃນກຳນົດເວລາ ຫ້າ ວັນ ລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີເປັນຕົ້ນໄປ.

ໃນກໍລະນີທີ່ບໍ່ສາມາດອະນຸຍາດໃຫ້ພິມໄດ້ ຕ້ອງເຮັດໜັງສືແຈ້ງຕອບອົງການດັ່ງກ່າວ ຢ່າງເປັນລາຍລັກອັກສອນ. ໃນກໍລະນີຫາກເຫັນດີໃຫ້ຈັດພິມຕາມໜັງສືສະເໜີນັ້ນ, ອົງການຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ ຕ້ອງໄດ້ສະໜອງຂໍ້ມູນ ທາງດ້ານເນື້ອໃນກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງໃຫ້ຄົບຖ້ວນ ແລະ ສົມບູນ ເຊັ່ນ ສະບັບຟາຍເວີດ (Microsoft Word), ສຳເນົາເອກະສານສະບັບຕົ້ນ ແລະ ເອກະສານອື່ນຖ້າມີ.

ອົງການຄຸ້ມຄອງການຈັດພິມ (ກົມໂຄສະນາເຜີຍແຜ່ກົດໝາຍ) ເປັນຜູ້ຮັບຜິດຊອບໃນການກວດກາ ເນື້ອໃນຂອງບັນດາປຶ້ມກົດໝາຍ, ປຶ້ມສັງລວມກົດໝາຍ, ປຶ້ມປະມວນກົດໝາຍ, ປຶ້ມສັງລວມນິຕິກຳໃຕ້ກົດໝາຍ ແລະ ປຶ້ມນິຕິກຳໃຕ້ກົດໝາຍ ໃຫ້ຖືກຕ້ອງ, ສອດຄ່ອງ ຕາມຕົ້ນສະບັບ ແລະ ຮູບແບບຂອງການຈັດພິມ[1].

### 4. ຮູບແບບ ແລະ ຂະໜາດ

ຮູບແບບ ລະ ຂະໜາດການພິມປຶ້ມນິຕິກຳ ສຳລັບຢູ່ ສປປ ລາວ ແມ່ນໄດ້ປະຕິບັດດັ່ງນີ້:

1) ຂະໜາດຂອງປຶ້ມສັງລວມກົດໝາຍ ແລະ ປຶ້ມສັງລວມນິຕິກຳໃຕ້ກົດໝາຍ: ກຳນົດໃຫ້ລວງຍາວ ແມ່ນ ຊາວຫ້າ ຊັງຕີແມັດ (25 cm), ລວງກວ້າງ ສິບເກົ້າ ຊັງຕີແມັດ (19 cm). ສຳລັບປຶ້ມກົດໝາຍ ແລະ ປຶ້ມນິຕິກຳໃຕ້ກົດໝາຍສະເພາະ ແມ່ນກຳນົດໃຫ້ລວງຍາວ ຊາວເອັດ ຊັງຕີແມັດ (21 cm), ລວງກວ້າງ ສິບຫ້າ ຊັງຕີແມັດ (15 cm) ຫຼື ຂະໜາດ A5 ກໍໄດ້;

2) ຟອນຕົວໜັງສື ກຳນົດເປັນ ເພັດສະຣາດໂອທີ (Phetsarath OT);

3) ຂະໜາດຕົວໜັງສືກຳນົດເປັນສິບສອງ (12), ພິມດ້ວຍນ້ຳມຶກສີດຳ, ເວັ້ນເສຍແຕ່ຕົວໜັງສືຢູ່ໜ້າປົກ ປຶ້ມ ແມ່ນອີງໃສ່ລັກສະນະຂອງສີໜ້າປົກ ແລະ ຫຼັງປົກປຶ້ມ;

4) ໜ້າປົກຂອງປຶ້ມຕ້ອງປະກອບດ້ວຍ ເຄື່ອງໝາຍຊາດ, ຄຳຂວັນ, ຊື່ກົດໝາຍ, ຊື່ອົງການທີ່ຈັດພິມ ແລະ ປີຈັດພິມ;

5) ຫຼັງປົກປຶ້ມໃຫ້ໃສ່ຊື່ຂອງໂຮງພິມ, ເລກທີອະນຸຍາດໂດຍກະຊວງຍຸຕິທຳ, ຈຳນວນປຶ້ມທີ່ພິມ, ພິມ ຄັ້ງທີເທົ່າໃດ ແລະ ຊື່ອົງການທີ່ໃຫ້ທຶນຊ່ວຍເຫຼືອ ຖ້າແມ່ນບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ໃຫ້ທຶນ;

6) ສີຂອງໜ້າປົກ ແລະ ຫຼັງປົກປຶ້ມ ແມ່ນໃຫ້ພາກສ່ວນກ່ຽວຂ້ອງເປັນຜູ້ກຳນົດ;

7) ຕ້ອງສະແກນ ມະຕິ ແລະ ລັດຖະດຳລັດ ຕາມນິຕິກຳສະບັບຕົ້ນ, ສຳລັບນິຕິກຳໃຕ້ກົດໝາຍ ແມ່ນ ໃຫ້ປະຕິບັດຕາມນິຕິກຳສະບັບຕົ້ນນັ້ນ;

---

[1] ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດພິມປຶ້ມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ປີ 2019, ມາດຕາ 6

8) ບໍ່ອະນຸຍາດໃຫ້ຈັດພິມປຶ້ມທຸກປະເພດທີ່ມີໜ້າປົກສີຂາວ ແລະ ຕົວໜັງສືສີດໍາທີ່ມີລັກສະນະຄ້າຍຄື ກັບປຶ້ມລັດຖະທໍາມະນູນ ແຫ່ງ ສປປ ລາວ;

9) ການຈັດພິມປຶ້ມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເປັນລິຂະສິດຂອງກະຊວງຍຸຕິທຳ, ຫ້າມຈັດພິມ ໂດຍບໍ່ໄດ້ຮັບອະນຸຍາດ.

**5. ສິ່ງທີ່ຄວນເອົາໃຈໃສ່**

ຢູ່ ສປປ ລາວ ການພິມປຶ້ມນິຕິກຳ ແມ່ນຕ້ອງໄດ້ປະຕິບັດຕາມຂັ້ນຕອນ ແລະ ລະບຽບການທີ່ກຳນົດໄວ້ຢ່າງຄັກແດ່ເພື່ອຫຼີກລ້ຽງການ ກະທຳທີ່ຜິດກົດໝາຍ ຫຼື ມີການລະເມີດສິດທີຕ່າງໆ.

ການບໍລິການວິຊາການໃນການຈັດພິມ ໃຫ້ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງການເງິນວ່າ ດ້ວຍກຳນົດໝາຍໃຊ້ຈ່າຍງົບປະມານຂອງລັດ ທີ່ໄດ້ປະກາດໃຊ້ໃນແຕ່ລະໄລຍະ.

ພາຍຫຼັງສຳເລັດຂັ້ນຕອນການດຳເນີນການຈັດພິມ, ອົງການຄຸ້ມຄອງການພິມ ຈະອອກໃບອະນຸຍາດຈັດພິມໃຫ້ອົງການຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ ຊຶ່ງສາມາດຈັດພິມໄດ້ຕາມຄວາມສາມາດທາງດ້ານງົບປະມານຂອງຕົນ.

ພາຍຫຼັງຈັດພິມສຳເລັດແລ້ວ ໃຫ້ອົງການຮັບຜິດຊອບສ້າງ,ປັບປຸງກົດໝາຍ ຈັດສົ່ງປຶ້ມກົດໝາຍ, ປຶ້ມນິຕິກຳໃຕ້ກົດໝາຍ, ປຶ້ມສັງລວມກົດໝາຍ ແລະ ປຶ້ມສັງລວມນິຕິກຳໃຕ້ກົດໝາຍ ໃຫ້ກະຊວງຍຸຕິທຳ ກົມໂຄສະນາເຜີຍແຜ່ກົດໝາຍ ເກັບຮັກສາໄວ້ ຈຳນວນ ຫ້າ ຫົວ.

ງົບປະມານໃນການຈັດພິມປຶ້ມກົດໝາຍ, ປຶ້ມນິຕິກຳໃຕ້ກົດໝາຍ, ປຶ້ມສັງລວມກົດໝາຍ ແລະ ປຶ້ມສັງລວມນິຕິກຳໃຕ້ກົດໝາຍ ແມ່ນໃຫ້ນຳໃຊ້ງົບປະມານຂອງອົງການທີ່ສະເໜີຈັດພິມນັ້ນ.

**ສະຫຼຸບແລ້ວ:**

ການໂຄສະນາເຜີຍແຜ່ກົດໝາຍຜ່ານການພິມປຶ້ມນິຕິກຳ ແມ່ນການເອົາກົດໝາຍຕົ້ນສະບັບມາຈັດພິມເປັນປຶ້ມກົດໝາຍ, ປຶ້ມສັງລວມກົດໝາຍ, ປຶ້ມປະມວນກົດໝາຍ, ປຶ້ມຄູ່ມືການໂຄສະນາເຜີຍແຜ່ນິຕິກຳເພື່ອແຈກຢາຍ, ຈຳໜ່າຍ, ນຳໃຊ້ເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ,ມາຄົ້ນຄວ້າ,ການຈັດຝຶກອົບຮົມ ແລະ ອື່ນໆ .

ສຳລັບຮູບແບບ, ຂະໜາດ, ສີ, ເນື້ອໃນ, ຂັ້ນຕອນການຂໍອະນຸຍາດຈັດພິມຕ້ອງໄດ້ຮັບອະນຸມັດຈາກກະຊວງຍຸຕິທຳ, ອົງການທີ່ກ່ຽວຂ້ອງ.

ມາດຕະຖານຂອງການຂຽນ ແລະ ການພິມຈຳໜ່າຍປຶ້ມນິຕິກຳຕິດຕົວ, ປຶ້ມຖາມ-ຕອບກ່ຽວກັບກົດໝາຍ, ຕ່າງກັບເອກະສານໂຄສະນາເຜີຍແຜ່ນິຕິກຳປະເພດອື່ນໆ ເຊັ່ນໂຄງຮ່າງບົດໂຄສະນາເຜີຍແຜ່ກົດໝາຍ, ບົດຂ່າວ,ປຶ້ມກົດໝາຍຕິດຕົວ ແລະ ປຶ້ມຖາມ-ຕອບກ່ຽວກັບກົດໝາຍມີເປົ້າໝາຍນຳໃຊ້ຢ່າງກວ້າງຂວາງເລີ່ມແຕ່ນັກປາຖະກະຖາ , ນັກໂຄສະນາ, ນັກຂ່າວໜັງສືພິມ, ວິທະຍຸ, ໂທລະພາບຈົນເຖິງນັກໄກ່ເກ່ຍ, ອາຈານທີ່ສິດສອນ, ນັກຮຽນ ແລະ ປະຊາຊົນບັນດາເຜົ່າ.

ສະນັ້ນ, ເພື່ອປະຕິບັດສຳເລັດພາລະບົດບາດຂອງເອກະສານປະເພດນີ້, ການຈັດຕັ້ງການຂຽນ ແລະ ການພິມຈຳໜ່າຍປຶ້ມນິຕິກຳຕິດຕົວ, ປຶ້ມຖາມ-ຕອບກ່ຽວກັບກົດໝາຍປະເພດຕ່າງໆ ຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດຕໍ່ບາງມາດຖານດັ່ງຕໍ່ໄປນີ້ :

- ໜຶ່ງ, ໂຄງປະກອບຂອງປຶ້ມຈະຕ້ອງຈະແຈ້ງ, ມີໂລຊິກ, ປະໂຫຍກຄຳເວົ້າສັ້ນ, ນຳໃຊ້ພາສາມະຫາຊົນ, ເຂົ້າໃຈງ່າຍ ແລະ ມີຄວາມໝາຍດຽວເພື່ອຊ່ວຍໃຫ້ຜູ້ອ່ານເຂົ້າໃຈຢ່າງຖືກຕ້ອງ, ຊັດເຈນ, ເປັນເອກະພາບຕໍ່ກັບຂໍ້ກຳນົດຕ່າງໆ ຂອງກົດໝາຍ ແລະ ປະຕິບັດງ່າຍ;

- ສອງ, ເນື້ອໃນຂອງປຶ້ມຈະຕ້ອງປະກອບດ້ວຍບັດດາບັນຫາແຜ່ຫຼາຍທົ່ວໄປ, ປະສົບພົບພໍ້ເລື້ອຍໆ ໃນການດຳລົງຊີວິດປະຈຳວັນ, ຫຼາຍຄົນໃຫ້ຄວາມສົນໃຈ ຫຼື ພົວພັນໂດຍກົງເຖິງຂົງເຂດການຄຸ້ມຄອງເສດຖະກິດ, ຄຸ້ມຄອງສັງຄົມ;

- ສາມ, ຮູບການ: ຂະໜາດຂອງປຶ້ມພໍດ້າມພໍດີ, ອ່ານງ່າຍ, ຄຸນນະພາບການພິມແຈ້ງ, ບໍ່ໜາຫຼາຍ, ຖືຕິດຕົວງ່າຍ ແລະ ສະດວກໃຫ້ແກ່ຜູ້ນຳໃຊ້;

- ສີ່, ລາຄາປຶ້ມເໝາະສົມ, ສອດຄ່ອງກັບລາຍຮັບທຳມະດາຂອງປະຊາຊົນເພື່ອສ້າງເງື່ອນໄຂໃຫ້ຫຼາຍຄົນສາມາດຊື້ໄດ້.

ປຶ້ມນິຕິກຳທີ່ຈັດພິມຈະຕ້ອງເອົາໃຈໃສ່ດ້ານຄຸນນະພາບ ແລະ ສ້າງຄວາມດຶງດູດໄປນຳ, ຊຶ່ງຜູ້ອ່ານ ຫຼື ນຳໃຊ້ປຶ້ມນິຕິກຳຕ້ອງໄດ້ຄຳນຶງໃຫ້ໄດ້ວ່າ:

1) ຢ່າຕັດສິນປຶ້ມອ່ານວ່າດີ ພຽງແຕ່ເຫັນໜ້າປົກງາມ.
2) ຢ່າຄິດວ່າເຂົາເປັນຄົນດີ ພຽງແຕ່ໄດ້ເຫັນໜ້າກັນພຽງຄັ້ງດຽວ.
3) ການທີ່ມັກອ່ານປຶ້ມເຫຼັ້ມໜຶ່ງ ບໍ່ໄດ້ໝາຍຄວາມວ່າປຶ້ມເຫຼັ້ມນັ້ນ ຈະມີເນື້ອໃນດີໝົດທຸກໜ້າ.
4) ການທີ່ມີຄວາມຮູ້ສຶກດີໆກັບໃຜຄົນໜຶ່ງ ບໍ່ຈຳເປັນວ່າເຂົາຄົນນັ້ນ ຕ້ອງປາສະຈາກຂໍ້ບົກຜ່ອງຢູ່ໃນຕົວ.
5) ການອ່ານປຶ້ມກ່ອນອື່ນຕ້ອງໃຊ້ເວລາ ແລະ ສະມາທິ.
6) ການອ່ານໃຈຄົນ ກໍ່ຕ້ອງໃຊ້ເວລາເປັນທີ່ພິສູດ,ເນື່ອງຈາກວ່າເຮົາບໍ່ສາມາດຕີລາຄາໃຜຄົນໜຶ່ງໄດ້ ໃນເວລາພົບເຫັນຄັ້ງທຳອິດ.
7) ປຶ້ມອ່ານມີຫຼາຍປະເພດໃຫ້ສຶກສາ ຈົ່ງທົດລອງອ່ານເບິ່ງກ່ອນ ຈິ່ງຕັດສິນໃຈໃນຕອນທ້າຍ.
8) ຄົນຍອມມີຫຼາຍປະເພດ ຢ່າເບິ່ງຄົນພຽງທີ່ໜ້າຕາ, ຢ່າຕີລາຄາວ່າດີ ຫຼື ຊົ່ວ ຖ້າຍັງບໍ່ຮູ້ຈັກດີເລີກພໍ.
9) ບາງຄົນ ບາງສິ່ງ ບາງຢ່າງ ທີ່ເຮົາແນມບໍ່ເຫັນຄຸນປະໂຫຍດຂອງມັນ ແຕ່ວ່າບາງທີວັນໜຶ່ງມັນອາດມີຄ່າສຳຫຼັບເຮົາ ແລ້ວສຸດທ້າຍຈຶ່ງຈະຮູ້ວ່າ ສິ່ງດັ່ງກ່າວມີຄ່າຕໍ່ຕົວເຮົາຫຼາຍໜ້ອຍພຽງໃດ.

**References:**


1. ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດພິມປຶ້ມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ປີ 2019;
2. ປະມວນເອກະສານຝຶກອົບຮົມທັກສະການໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
3. ປຶ້ມໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ ສປປ ລາວ, ປີ 2022;
4. ບົດວັນສ້າງຕັ້ງວິທະຍຸກະຈາຍສຽງ 13 ສິງຫາ 1960.